ບໍລິສັດ ມະຫະທຶນ ເຊົ່າສິນເຊື່ອ ມະຫາຊົນ

ບົດສະຫຼຸບການເຄື່ອນໄຫວທຸລະກິດ

ສຳລັບງວດສາມເດືອນ ສິ້ນສຸດ ວັນທີ 31 ມີນາ 2022

ບົດສະຫຼຸບການເຄື່ອນໄຫວທຸລະກິດ 3 ເດືອນຕົ້ນປີ
(ມັງກອນ - ມີນາ) ປີ 2022

ສາລະບານ

ໜ້າ

1. ບໍລິສັດ ມະຫະທຶນ ເຊົ່າສິນເຊື່ອ ມະຫາຊົນ.....1

2. ປະຫວັດຄວາມເປັນມາ.....1

3. ປັດຊະຍາ ແລະ ການດຳເນີນທຸລະກິດ.....5

3.1 ປັດຊະຍາບໍລິສັດ.....5

3.2 ການດຳເນີນທຸລະກິດຫຼັກ.....6

4. ການຄຸ້ມຄອງບໍລິສັດ ແລະ ການບໍລິຫານຈັດການ.....8

4.1 ໂຄງຮ່າງການຈັດຕັ້ງ.....8

4.2 ຄະນະກຳມະການຂອງສະພາບໍລິຫານ.....9

4.2.1 ຄະນະກຳມະການກວດສອບ.....10

4.2.2 ຄະນະກຳມະການຄຸ້ມຄອງຄວາມສ່ຽງ.....10

4.2.3 ຄະນະກຳມະການຄັດເລືອກ.....11

4.2.4 ຄະນະກຳມະການກຳນົດຄ່າຕອບແທນ.....11

4.2.5 ຄະນະກຳມະການກວດສອບລາຍການທີ່ກ່ຽວພັນ.....11

5. ຜົນການດຳເນີນທຸລະກິດ.....12

5.1 ຜົນການດຳເນີນດ້ານການຕະຫຼາດ.....12

5.2 ລາຍຮັບ.....12

5.3 ລາຍຈ່າຍ.....13

5.4 ກຳໄລສຸດທິ ແລະ ອັດຕາກຳໄລສຸດທິ.....13

5.5 ການມອບພັນທະອາກອນ.....14

1. ບໍລິສັດ ມະຫະທຶນ ເຊົ່າສິນເຊື່ອ ມະຫາຊົນ

ຂໍ້ມູນທົ່ວໄປຂອງບໍລິສັດ

ຜູ້ສະເໜີອອກຈຳໜ່າຍ	:	ບໍລິສັດ ມະຫະທຶນ ເຊົ່າສິນເຊື່ອ ມະຫາຊົນ
ປະເພດທຸລະກິດ	:	ໃຫ້ບໍລິການເຊົ່າສິນເຊື່ອ
ສັນຍາລັກ	:	ມຫຫຊ
ສຳນັກງານໃຫຍ່	:	ເຮືອນເລກທີ 628, (ຫຼັກ5) ຖະໜົນໄກສອນພົມວິຫານ,ບ້ານໂພນພະເນົາ, ເມືອງ ໄຊເສດຖາ, ນະຄອນຫຼວງວຽງຈັນ
ໃບອະນຸຍາດລົງທຶນຕ່າງປະເທດ	:	ໃບອະນຸຍາດລົງທຶນຕ່າງປະເທດ, ເລກທີ:196-11/ຜທ/ລທ3, ລົງວັນທີ: 10 ສິງຫາ 2011
ໃບທະບຽນວິສາຫະກິດ	:	0930/ຈທວ ລົງວັນທີ 24 ມີຖຸນາ 2021
ເລກປະຈຳຕົວຜູ້ເສຍອາກອນ	:	725714405-9-00
ທຶນຈົດທະບຽນ	:	40.000.000.000 ກີບ
ຈຳນວນຮຸ້ນທັງໝົດ	:	400.000.000 ຮຸ້ນ
ອີເມວ	:	info@mahathuen.com
ເວັບໄຊ	:	www.mahathuen.com
ໂທລະສັບ	:	(856) 21 418065
ໂທລະສານ	:	(856) 21 418066

2. ປະຫວັດຄວາມເປັນມາ

ບໍລິສັດ ມະຫະທຶນ ເຊົ່າສິນເຊື່ອ ມະຫາຊົນ (ຕໍ່ໄປນີ້ເອີ້ນວ່າ: "**ບໍລິສັດ**") ໄດ້ສ້າງຕັ້ງຂຶ້ນໃນວັນທີ 02 ກັນຍາ 2011 ໃນຮູບແບບ ບໍລິສັດຈຳກັດ ດ້ວຍທຶນຈົດທະບຽນ 300.000 ໂດລາສະຫະລັດ. ບໍລິສັດໄດ້ຮັບໃບທະບຽນວິສາຫະກິດເລກທີ 3151/ຫຈທ, ປະເພດທຸລະກິດແມ່ນການໃຫ້ບໍລິການເຊົ່າສິນເຊື່ອ (ສັງຫາລິມາຊັບ), ຊຶ່ງ ບໍລິສັດ ມະຫະທຶນ ເຊົ່າສິນເຊື່ອ ຈຳກັດ ຖືຮຸ້ນໂດຍນັກທຸລະກິດຄົນລາວ 12

ສ່ວນຮ້ອຍ ແລະ ນັກທຸລະກິດຄົນໄທ 88 ສ່ວນຮ້ອຍ. ຜູ້ຖືຮຸ້ນຝ່າຍລາວແມ່ນ ທ່ານ ນາງ ອິນທະວິໄລ ອຸດົມ ແລະ ຜູ້ຖືຮຸ້ນຝ່າຍໄທແມ່ນ ທ່ານ ຊາຄຣິດ ນັກສອນ, ທັງສອງ ທ່ານ ມີປະສົບການໃນການເຮັດທຸລະກິດໃນ ສປປ ລາວ ມາຫຼາຍກວ່າ 20 ປີ.

ທຸລະກິດເຊົ່າສິນເຊື່ອ (Leasing) ໃນ ສປປ ລາວ ເປັນທຸລະກິດທີ່ຕ້ອງໄດ້ຮັບອະນຸຍາດໃນການດຳເນີນທຸລະກິດ ຈາກທະນາຄານແຫ່ງ ສປປ ລາວ ໂດຍປະຈຸບັນບໍລິສັດເຊົ່າສິນເຊື່ອຢູ່ໃນການຄຸ້ມຄອງຈາກກົມຄຸ້ມຄອງສະຖາບັນການເງິນ ທະນາຄານແຫ່ງ ສປປ ລາວ.

ບໍລິສັດ ເຄື່ອນໄຫວ ແລະ ດຳເນີນທຸລະກິດທີ່ກ່ຽວກັບ ບໍລິການເຊົ່າສິນເຊື່ອ (ສັງຫາລິມະຊັບ). ບໍລິສັດດຳເນີນທຸລະກິດດ້ານເຊົ່າສິນເຊື່ອລາຍຍ່ອຍ (Retail finance) ໃນ ສປປ ລາວ ໂດຍໃນເບື້ອງຕົ້ນຈະໄດ້ດຳເນີນທຸລະກິດການໃຫ້ບໍລິການເຊົ່າສິນເຊື່ອລົດຈັກທີ່ມາຈາກປະເທດຍີ່ປຸ່ນຄື: ຍີ່ຫໍ້ ຮອນດ້າ (HONDA), ຊູຊູກິ (SUZUKI), ຢາມາຮາ (YAMAHA) ແລະ ອື່ນໆ ເປັນທຸລະກິດຫຼັກກ່ອນ ເພື່ອເປັນການສ້າງຖານທຸລະກິດ, ສຶກສາຮຽນຮູ້, ສະສົມປະສົບການໃຫ້ກັບອົງກອນ ລວມທັງການສ້າງບຸກຄະລາກອນ, ລະບົບການເຮັດວຽກທີ່ ເໝາະສົມ ແລະ ຮັດກຸມ ຕະຫຼອດຈົນເຖິງການຮຽນຮູ້ພຶດຕິກຳ ແລະ ການດຳເນີນທຸລະກິດໃນ ສປປ ລາວ ຈາກນັ້ນຈະຂະຫຍາຍການລົງທຶນໃນທຸລະກິດສິນເຊື່ອລາຍຍ່ອຍປະເພດອື່ນໆຕໍ່ໄປ.

ນະໂຍບາຍການດຳເນີນທຸລະກິດໃນຊ່ວງທຳອິດທີ່ເປີດດຳເນີນທຸລະກິດ ຕາມແຜນໄລຍະສັ້ນ 3 ປີ ຈະເນັ້ນການສ້າງອົງກອນ ແລະ ບຸກຄະລາກອນເປັນສຳຄັນ. ນະໂຍບາຍການເຮັດທຸລະກິດຈຶ່ງອອກແນວອະນຸລັກນິຍົມ (Conservative) ໃນດ້ານການຕະຫຼາດ ແລະ ການພິຈາລະນາການໃຫ້ເຊົ່າສິນເຊື່ອ ມີແຜນການປະຕິບັດງານທີ່ຊັດເຈນ, ມີການຄາດຄະເນທາງການເງິນເພື່ອອະນຸມັດໃຫ້ບໍລິການດ້ານການເຊົ່າສິນເຊື່ອຂະໜາດນ້ອຍ ໃຊ້ເງິນລົງທຶນທີ່ບໍ່ສູງຫຼາຍ, ແຕ່ຈະກຳນົດຮູບແບບການປະຕິບັດວຽກງານແບບມືອາຊີບ ຈຶ່ງກຳນົດໃຫ້ມີການສ້າງລະບຽບພາຍໃນ ໃນການປະຕິບັດ ຕະຫຼອດຈົນຂໍ້ກຳນົດຕ່າງໆ ໃນການພິຈາລະນາການໃຫ້ເຊົ່າສິນເຊື່ອທີ່ຊັດເຈນ ແຕ່ສາມາດຢືດຢຸ່ນໄດ້ຕາມຄວາມເໝາະສົມກັບສະພາບການ ແລະ ການແຂ່ງຂັນຂອງທຸລະກິດ.

ໄລຍະປີ 2014 - 2016 ບໍລິສັດ ໄດ້ເນັ້ນການຂະຫຍາຍຂະໜາດຂອງຖານລູກຄ້າ ແລະ ສ້າງຄວາມເປັນຜູ້ນຳຕະຫຼາດ, ເພີ່ມອັດຕາສ່ວນຄອງຕະຫຼາດໃຫ້ໄດ້ຫຼາຍຂຶ້ນ ເພື່ອຂະຫຍາຍສາຂາ ແລະ ໜ່ວຍບໍລິການໃນນະຄອນຫຼວງວຽງຈັນໃຫ້ຫຼາຍຂຶ້ນໃນອານາຄົດ. ນອກຈາກນີ້ ບໍລິສັດ ມີແຜນໃຫ້ມີການເພີ່ມຜະລິດຕະພັນໃຫ້ຫຼາຍຂຶ້ນເຊັ່ນ: ການໃຫ້ບໍລິການເຊົ່າສິນເຊື່ອລົດຈັກທີ່ໃຊ້ແລ້ວ (Used motorcycle) ລວມເຖິງ ການໃຫ້ບໍລິການດ້ານການໃຫ້ສິນເຊື່ອຄືນໃໝ່ (Refinance) ຈາກຖານລູກຄ້າເກົ່າທີ່ມີປະຫວັດການຊຳລະເງິນທີ່ດີ ເພື່ອເປັນການສ້າງຖານລູກຄ້າ ເພື່ອໄປຂະຫຍາຍຜະລິດຕະພັນປະເພດອື່ນໆ.

ນັບແຕ່ປີ 2017 ເປັນຕົ້ນໄປ ບໍລິສັດ ມີແຜນຈະຂະຫຍາຍສາຂາ ແລະ ໜ່ວຍບໍລິການໄປຕ່າງແຂວງ ແລະ ຂະຫຍາຍທຸລະກິດເຊົ່າສິນເຊື່ອປະເພດອື່ນໆ, ໂດຍມີແຜນການລະດົມທຶນໃນຕະຫຼາດຫຼັກຊັບ

ລາວ (Lao Securities Exchange ຫຼື LSX), ຊຶ່ງຈະຕ້ອງມີການກຳນົດຍຸດທະສາດໃນການດຳເນີນທຸລະກິດໃນທາງບຸກ (Aggressive) ໃຫ້ຫຼາຍຂຶ້ນ, ໂດຍຈະຕ້ອງກຳນົດວິທີການຄວບຄຸມພາຍໃນທີ່ຮັດກຸມ ລວມເຖິງການບໍລິຫານຄວາມສ່ຽງທີ່ເໝາະສົມກັບຕະຫຼາດ ສ້າງອົງກອນໃຫ້ມີການບໍລິຫານຈັດການທີ່ດີ ແລະ ສ້າງຄວາມໝັ້ນຄົງໃຫ້ແກ່ທຸລະກິດ ໂດຍຈະຕ້ອງສ້າງຄວາມສົມດຸນລະຫວ່າງລູກຄ້າ, ຄູ່ຄ້າ, ນັກລົງທຶນ ແລະ ຜູ້ຖືຮຸ້ນຂອງບໍລິສັດ, ເນື່ອງຈາກບໍລິສັດ ກະກຽມເຂົ້າຈົດທະບຽນໃນຕະຫຼາດຫຼັກຊັບລາວ.

ບໍລິສັດໄດ້ຫັນປ່ຽນຮູບແບບເປັນ ບໍລິສັດ ມະຫາຊົນ ໃນວັນທີ 20 ພະຈິກ 2017 ໂດຍມີທຶນຈົດທະບຽນ 27.760.000.000 ກີບ ຊຶ່ງດຳເນີນທຸລະກິດການໃຫ້ບໍລິການ ເຊົ່າສິນເຊື່ອ (ສັງຫາລິມາຊັບ) ພາຍໃຕ້ກົດໝາຍ ຂອງ ສປປ ລາວ (ຊຶ່ງຕໍ່ໄປນີ້ ເອີ້ນວ່າ “ວັນທີປ່ຽນຮູບແບບບໍລິສັດ”) ໂດຍມີຜູ້ຖືຮຸ້ນ ຈາກບໍລິສັດ ມະຫະທຸນ ໂຮນດິ້ງ ຈຳກັດ ຈຳນວນ 97,5792507204611 ສ່ວນຮ້ອຍ ຊຶ່ງເປັນບໍລິສັດ ຈາກປະເທດໄທ, ທ່ານ ນາງ ອິນທະວິໄລ ອຸດົມ ຖືຮຸ້ນຈຳນວນ 2,4204322766571 ສ່ວນຮ້ອຍ ແລະ ຜູ້ຖືຮຸ້ນລາຍຍ່ອຍ 11 ທ່ານ ແມ່ນຖືຮຸ້ນຈຳນວນ 0,0003170028818 ສ່ວນຮ້ອຍ.

ນັບຕັ້ງແຕ່ບໍລິສັດສ້າງຕັ້ງຂຶ້ນ ຈົນມາເຖິງກ່ອນການອອກຈຳໜ່າຍຮຸ້ນ (IPO) ບໍລິສັດ ໄດ້ມີການເພີ່ມທຶນຈົດທະບຽນ 6 ຄັ້ງ. ໃນມື້ສ້າງຕັ້ງບໍລິສັດມີທຶນຈົດທະບຽນ 300.000 ໂດລາສະຫະລັດ ຕໍ່ມາໃນປີ 2012 ໄດ້ເພີ່ມທຶນ ແລະ ປ່ຽນທຶນຈົດທະບຽນມາເປັນສະກຸນເງິນກີບ 5,6 ຕື້ກີບ. ໃນປີ 2014 ໄດ້ມີການເພີ່ມທຶນຈົດທະບຽນ 2 ຄັ້ງ ຄື: 12,8 ຕື້ກີບ ແລະ 17,76 ຕື້ກີບ ຕາມລຳດັບ. ໃນປີ 2015 ແມ່ນເພີ່ມທຶນຈົດທະບຽນມາເປັນ 23,36 ຕື້ກີບ ແລະ ໃນປີ 2016 ກໍ່ໄດ້ມີການເພີ່ມທຶນຈົດທະບຽນ 2 ຄັ້ງຄື: 25,6 ຕື້ກີບ ແລະ 27,76 ຕື້ກີບ ຕາມລຳດັບ.

ປີ 2018 ບໍລິສັດ ໄດ້ຈັດຕັ້ງສາຂາແຫ່ງທຳອິດຂຶ້ນທີ່ ແຂວງ ສະຫວັນນະເຂດ ເພື່ອທີ່ຈະໃຫ້ບໍລິການສິນເຊື່ອສຳລັບລູກຄ້າ ໂດຍໃນໄລຍະທຳອິດຈະໃຫ້ບໍລິການເຊົ່າສິນເຊື່ອສຳລັບລົດຈັກກ່ອນ ແລະ ຈະຂະຫຍາຍໃຫ້ການບໍລິການຜະລິດຕະພັນອື່ນໆຕໍ່ໄປ ສາຂາສະຫວັນນະເຂດຕັ້ງຢູ່ ເຮືອນເລກທີ 013 ໜ່ວຍ 1 ບ້ານ ລັດຕະນະລັງສີໄຕ້ ເມືອງ ໄກສອນພົມວິຫານ ແຂວງ ສະຫວັນນະເຂດ

ໃນປີນີ້ ບໍລິສັດໄດ້ອອກຮຸ້ນເພີ່ມທຶນໃໝ່ ຈຳນວນ 12.240.000 ຮຸ້ນ ລາຄາຕາມມູນຄ່າ 1.000 ກີບຕໍ່ຮຸ້ນ ເພື່ອຈຳໜ່າຍໃຫ້ກັບປະຊາຊົນທົ່ວໄປ (Initial Public Officering) ໂດຍໄດ້ຮັບອະນຸຍາດຈາກ ຄະນະກຳມະການຄຸ້ມຄອງຫຼັກຊັບ ເມື່ອວັນທີ 13 ມີຖຸນາ 2018 ພາຍຫຼັງຈາກການຈຳໜ່າຍຮຸ້ນເພີ່ມທຶນ ແລ້ວເຮັດໃຫ້ບໍລິສັດມີຮຸ້ນຈຳນວນ 40.000.000 ຮຸ້ນ ຫຼື ມີທຶນຈົດທະບຽນລວມທັງໝົດ 40.000.000.000 ກີບ ຊຶ່ງບໍລິສັດໄດ້ເຂົ້າຈົດທະບຽນໃນຕະຫຼາດຫຼັກຊັບລາວ ເມື່ອວັນທີ 18 ກັນຍາ 2018 ຖືເປັນບໍລິສັດລຳດັບທີ 8 ຂອງຕະຫຼາດຫຼັກຊັບລາວ.

ປີ 2019 ບໍລິສັດ ໄດ້ຈັດຕັ້ງໜ່ວຍບໍລິການລູກຄ້າຂຶ້ນ 1 ແຫ່ງໃນແຂວງ ສະຫວັນນະເຂດ ກໍຄື ໜ່ວຍບໍລິການ ດົງເຫັນ ມີທີ່ຕັ້ງຢູ່ ເຮືອນເລກທີ 254/259 ບ້ານດົງເຫັນ ຖະໜົນເສັ້ນທາງເລກທີ 9 ເມືອງ ອາດສະພັງທອງ ແຂວງ ສະຫວັນນະເຂດ

ໃນເດືອນ ມິຖຸນາ ປີດຽວກັນນີ້ ບໍລິສັດໄດ້ເລີ່ມໃຫ້ບໍລິການເຊົ່າສິນເຊື່ອສຳລັບອຸປະກອນທາງການກະເສດ ເຊິ່ງເລີ່ມຕົ້ນຈາກລົດໄຖນາ ປະເພດເດີນຕາມ ແລະ ເມື່ອມີຄວາມພ້ອມຫຼາຍຂຶ້ນຈະຂະຫຍາຍການໃຫ້ບໍລິການເຊົ່າສິນເຊື່ອໃຫ້ກວມລວມເຄື່ອງມືທາງການກະເສດໃຫ້ມີຄວາມຫຼາກຫຼາຍຂຶ້ນ

ປີ 2020 ບໍລິສັດ ໄດ້ເພີ່ມຜະລິດຕະພັນໃຫມ່ ໂດຍເລີ່ມໃຫ້ບໍລິການເຊົ່າສິນເຊື່ອຄືນໃຫມ່ (Refinance) ສຳລັບລົດທີ່ໃຊ້ແລ້ວ (Used car) ເພື່ອເພີ່ມຄວາມຫຼາກຫຼາຍຂອງຜະລິດຕະພັນ ສຳລັບເປັນທາງເລືອກໃຫ້ກັບລູກຄ້າຂອງບໍລິສັດ

ເມື່ອວັນທີ 4 ທັນວາ 2020 ກອງປະຊຸມວິສາມັນ ຜູ້ຖືຮຸ້ນ ຄັ້ງທີ 1 ປີ 2020 ໄດ້ມີມະຕິເຫັນດີດ້ວຍມະຕິສະເພາະ ດັ່ງນີ້:

1. ແກ້ໄຂສັດສ່ວນຫຸ້ນຂອງຜູ້ສ້າງຕັ້ງ ແລະ ປ່ຽນສັດສ່ວນຮຸ້ນ Floating ໃນຕະຫຼາດລັກຊັບລາວ ເປັນ ສັດສ່ວນສູງສຸດຕາມທີ່ຕະຫຼາດຫຼັກຊັບລາວ ຫຼື ສຳນັກງານຄຸ້ມຄອງຫຼັກຊັບລາວ ຫຼື ກົດໝາຍທີ່ກ່ຽວຂ້ອງກຳນົດໄວ້ ໂດຍມອບອຳນາດໃຫ້ຝ່າຍບໍລິຫານເປັນຜູ້ດຳເນີນການໃນດ້ານເອກະສານຕ່າງໆ ຈົນກວ່າຈະດຳເນີນການແລ້ວສຳເລັດ
2. ປ່ຽນແປງມູນຄ່າກຳນົດ (Par Value) ຈາກ 1.000 ກີບ ເປັນ 100 ກີບ ແລະ ເພີ່ມຈຳນວນຮຸ້ນຈາກ 40.000.000 ຮຸ້ນ ເປັນ 400.000.000 ຮຸ້ນ ໂດຍມີທຶນຈົດທະບຽນ 40.000.000.000 ກີບ ເທົ່າເດີມ ໂດຍມອບອຳນາດໃຫ້ຝ່າຍບໍລິຫານເປັນຜູ້ດຳເນີນການໃນດ້ານເອກະສານຕ່າງໆ ຈົນກວ່າຈະດຳເນີນການແລ້ວສຳເລັດ

ປີ 2021, ບໍລິສັດໄດ້ສຳເລັດການແຕກຮຸ້ນເມື່ອວັນທີ 24 ມິຖຸນາ 2021 ເຊິ່ງມູນຄ່າຮຸ້ນເທົ່າກັບ 100 ກີບຕໍ່ຮຸ້ນ ແລະ ຈຳນວນຮຸ້ນທັງໝົດເທົ່າກັບ 400.000.000 ຮຸ້ນ.

ເມື່ອວັນທີ 25 ຕຸລາ 2021 ບໍລິສັດໄດ້ມີການເປີດໂຕ Mobile application M HUK ເຊິ່ງເປັນແອັບທີ່ອຳນວຍຄວາມສະດວກໃນການຢຽກເບິ່ງຂໍ້ມູນບັນຊີສິນເຊື່ອຂອງລູກຄ້າ ແລະ ຍັງເປັນຊ່ອງທາງໃນການນຳສະເໜີຜະລິດຕະພັນຕ່າງໆຂອງບໍລິສັດຜ່ານທາງສະມາດໂຟນລວມເຖິງການຕິດຕໍ່ສື່ສານລະຫວ່າງລູກຄ້າກັບບໍລິສັດໃຫ້ມີຄວາມວ່ອງໄວຍິ່ງຂຶ້ນ

ເມື່ອວັນທີ 13 ສິງຫາ 2021 ສະພາບໍລິຫານໄດ້ອະນຸມັດບໍລິສັດ ຂະຫຍາຍພື້ນທີ່ບໍລິການເພີ່ມເຕີມທີ່ ແຂວງ ຄຳມ່ວນ ເພື່ອທີ່ຈະໃຫ້ບໍລິການສິນເຊື່ອສຳລັບລູກຄ້າ ສາຂາ ຄຳມ່ວນ ຕັ້ງຢູ່ ເຮືອນເລກທີ 190, ໜ່ວຍ 13, ບ້ານ ວຽງວິໄລ, ເມືອງ ທ່າແຂກ, ແຂວງ ຄຳມ່ວນ

3. ປັດຊະຍາ ແລະ ການດຳເນີນທຸລະກິດຫຼັກ

3.1 ປັດຊະຍາບໍລິສັດ

ຄຳຂວັນ (Slogan)

“ທຸກເລື່ອງສິນເຊື່ອເປັນໄປໄດ້ທີ່ ມະຫະທຶນ”

“All Financial is possible here”

ວິໄສທັດ (Vision)

“ມະຫະທຶນ ຈະເປັນໜຶ່ງບໍລິສັດໃນຕະຫຼາດຫຼັກຊັບລາວທີ່ມີການປົກຄອງທີ່ດີ ແລະ ເປັນຜູ້ນຳໃນທຸລະກິດເຊົ່າສິນເຊື່ອໃນ ສປປ.ລາວ”

“ We will be a good governance company on Lao Securities Exchange and the leader of Leasing business in Lao PDR”

ພາລະກິດ (Mission)

“ທຸກເລື່ອງສິນເຊື່ອເປັນໄປໄດ້ທີ່ ມະຫະທຶນ” ຄືຄຳໝັ້ນສັນຍາໃນການດຳເນີນທຸລະກິດຂອງເຮົາທີ່ໃຫ້ກັບຜູ່ທີ່ມີສ່ວນໄດ້ສ່ວນເສຍ ໂດຍມີພາລະກິດດັ່ງນີ້:

ຕໍ່ລູກຄ້າ : ເປັນໜຶ່ງໃນໃຈລູກຄ້າດ້ວຍທີມງານມືອາຊີບໃຫ້ບໍລິການທີ່ປະທັບໃຈ ຍຸດຕິທຳ ແລະ ນະວັດຕະກຳທາງການເງິນທີ່ທັນສະໄໝ

ຕໍ່ພະນັກງານ : ພັດທະນາບຸກຄະລາກອນໃຫ້ເປັນມືອາຊີບ ແລະ ສ້າງຄວາມໝັ້ນຄົງໃນຊີວິດການເຮັດວຽກງານ ແລະ ຊີວິດຄອບຄົວ

ຕໍ່ຜູ່ຖືຮຸ້ນ : ເປັນໜຶ່ງບໍລິສັດໃນຕະຫຼາດຫຼັກຊັບລາວທີ່ມີການປົກຄອງທີ່ດີ ແລະ ໃຫ້ຜົນຕອບແທນໃນລະດັບທີ່ໜ້າລົງທຶນ

ຕໍ່ຄູ່ຄ້າ : ສ້າງຄວາມໄວ້ວາງໃຈຕໍ່ພັນທະມິດທາງທຸລະກິດທີ່ພ້ອມຈະເຕີບໂຕ ແລະ ປະສົບຄວາມສຳເລັດໄປນຳກັນ

ຕໍ່ສັງຄົມ : ເພື່ອເປັນທາງເລືອກໃນການລົງທຶນສຳລັບປະຊາຊົນລາວ

3.2 ການດຳເນີນທຸລະກິດຫຼັກ

ບໍລິສັດປະກອບທຸລະກິດການໃຫ້ບໍລິການເຊົ່າສິນເຊື່ອລົດຈັກ ໂດຍແບ່ງອອກເປັນ 3 ລັກສະນະ ການໃຫ້ບໍລິການດັ່ງນີ້:

1. ການໃຫ້ບໍລິການເຊົ່າສິນເຊື່ອລົດຈັກໃໝ່ ແລະ ສິນເຊື່ອຜະລິດຕະພັນອື່ນໆ (ມືໜຶ່ງ)
2. ການໃຫ້ບໍລິການສິນເຊື່ອລົດຈັກທີ່ໃຊ້ແລ້ວ ແລະ ສິນເຊື່ອຜະລິດຕະພັນອື່ນໆ (ມືສອງ)
3. ສິນເຊື່ອລົດຈັກຄືນໃຫມ່

3.2.1 ບໍລິການເຊົ່າສິນເຊື່ອລົດຈັກໃໝ່ ແລະ ສິນເຊື່ອຜະລິດຕະພັນອື່ນໆ (ມືໜຶ່ງ)

ບໍລິສັດ ປະກອບທຸລະກິດໃຫ້ບໍລິການເຊົ່າສິນເຊື່ອລົດຈັກ ໂດຍເນັ້ນລົດຈັກຍີ່ຫໍ້ຈາກປະເທດຍີ່ປຸ່ນທີ່ໄດ້ຮັບຄວາມນິຍົມຂອງຕະຫຼາດໄດ້ແກ່:ຮອນດ້າ (HONDA), ຢາມາຮ່າ (YAMAHA), ຊູຊູກິ (SUSUKI) ແລະ ອື່ນໆ ໂດຍປະມານ 90 ສ່ວນຮ້ອຍຂອງລົດຈັກທີ່ໃຫ້ບໍລິການເຊົ່າສິນເຊື່ອທັງໝົດ ຈະເປັນລົດຈັດຍີ່ຫໍ້ຮອນດ້າ HONDA ໃນນັ້ນມີກຸ່ມລູກຄ້າເປົ້າໝາຍຄື ກຸ່ມລູກຄ້າລາຍຍ່ອຍທົ່ວໄປ ເຊິ່ງມີລາຍຮັບໝັ້ນຄົງລະດັບໜ້ອຍ ເຖິງ ປານກາງ.

ທັງນີ້ ການໃຫ້ບໍລິການເຊົ່າສິນເຊື່ອລົດຈັກເມື່ອລູກຄ້າຕ້ອງການຊື້ລົດຈັກນຳຮ້ານຕົວແທນຈຳໜ່າຍລົດ ແຕ່ບໍ່ມີເງິນພຽງພໍ ຫຼື ຕ້ອງການຈ່າຍແບບຜ່ອນລູກຄ້າກໍ່ຈະວາງເງິນດາວ (ວາງເງິນຂັ້ນຕ່ຳ) ຈຳນວນໜຶ່ງ, ສ່ວນຈຳນວນທີ່ເຫຼືອລູກຄ້າຈະເຮັດສັນຍາເຊົ່າສິນເຊື່ອກັບບໍລິສັດ ເຊິ່ງລູກຄ້າທີ່ຕົກລົງເຮັດສັນຍາເຊົ່າສິນເຊື່ອກັບບໍລິສັດ ຈະຈ່າຍເງິນຊຳລະເງິນຄ່າງວດເປັນລາຍເດືອນໃຫ້ບໍລິສັດ ໂດຍສາມາດຄອບຄອງ ແລະ ນຳໃຊ້ລົດຈັກທີ່ເຊົ່າສິນເຊື່ອນັ້ນໄດ້ ເຊິ່ງການບຳລຸງຮັກສາຈະຢູ່ໃນຄວາມຮັບຜິດຊອບຂອງລູກຄ້າ ສ່ວນກຳມະສິດລົດຈັກຈະຖືກໂອນໃຫ້ແກ່ລູກຄ້າກໍ່ຕໍ່ເມື່ອລູກຄ້າຊຳລະຄ່າງວດຄົບຕາມສັນຍາແລ້ວ. ໃນກໍລະນີທີ່ລູກຄ້າຜິດສັນຍາໂດຍບໍ່ສາມາດຊຳລະເງິນຄ່າງວດ ຫຼື ຄ້າງຈ່າຍຕັ້ງແຕ່ 3 ງວດຕິດຕໍ່ກັນ ສັນຍາອາດຈະຖືກຍົກເລີກກ່ອນກຳນົດອາຍຸສັນຍາ ແລະ ລູກຄ້າຕ້ອງສົ່ງລົດຈັກຄືນໃຫ້ບໍລິສັດ.

3.2.2 ເຊົ່າສິນເຊື່ອລົດຈັກທີ່ໃຊ້ແລ້ວ ແລະ ສິນເຊື່ອຜະລິດຕະພັນອື່ນໆ (ມືສອງ)

ບໍລິສັດ ໃຫ້ບໍລິການເຊົ່າສິນເຊື່ອລົດຈັກທີ່ໃຊ້ແລ້ວ (ມືສອງ) ຈາກລົດຈັກທີ່ຍຶດມາຈາກລູກຄ້າທີ່ບໍ່ສາມາດຊຳລະເງິນຄ່າງວດຕາມສັນຍາໄດ້ ເຊິ່ງລັກສະນະ ແລະ ຂັ້ນຕອນການບໍລິການແມ່ນຈະຄ້າຍຄືກັນກັບການບໍລິການເຊົ່າສິນເຊື່ອລົດຈັກໃຫມ່. ການໃຫ້ບໍລິການເຊົ່າສິນເຊື່ອລົດຈັກທີ່ໃຊ້ງານແລ້ວ (ມືສອງ) ຖືເປັນອີກໜຶ່ງຜະລິດຕະພັນ ໃນການຂະຫຍາຍຖານລູກຄ້າຂອງບໍລິສັດໃຫມ່ ເພື່ອ

ຕອບສະໜອງຄວາມຕ້ອງການລົດຈັກຍີ່ປຸ່ນມີສອງສະພາບດີໃຫ້ແກ່ຜູ້ບໍລິໂພກໃນຕະຫຼາດ ແລະ ໃນອານາຄົດ ບໍລິສັດຈະມີແຜນຂະຫຍາຍການບໍລິການດັ່ງກ່າວ ໄປຍັງຮ້ານຕົວແທນຈຳໜ່າຍລົດຈັກມືສອງ ໂດຍເນັ້ນຈາກປະເທດຍີ່ປຸ່ນຕາມຍີ່ຫໍ້ທີ່ກ່າວມາຂ້າງເທິງນີ້.


3.2.3 ບໍລິການສິນເຊື່ອລົດຈັກຄືນໃຫມ່

ບໍລິສັດມີການບໍລິການ ໃຫ້ສິນເຊື່ອລົດຈັກຄືນໃຫມ່ (Refinance) ໂດຍມີລູກຄ້າຜູ້ທີ່ມີຄວາມຕ້ອງການນຳໃຊ້ເງິນສາມາດນຳລົດຈັກຂອງຕົນ ທີ່ມີສັນຍາເຊົ່າສິນເຊື່ອກັບບໍລິສັດ ຫຼື ມີສັນຍາກັບບໍລິສັດເຊົ່າສິນເຊື່ອອື່ນມາຄ້ຳປະກັນ ເພື່ອທຳການປັບປຸງໂຄງສ້າງໜີ້ຂອງຜູ້ຂໍສິນເຊື່ອ ຫຼື ເອົາລົດຈັກມາຄ້ຳປະກັນການຂໍສິນເຊື່ອເພື່ອຮັບເງິນ ໂດຍຕ້ອງມີການລະບຸຊັດເຈນ ເຖິງວັດຖຸປະສົງຂອງການ Refinance ໃຫ້ຊັດເຈນເຊິ່ງບໍລິສັດຈະທຳການຕີມູນຄ່າລົດຈັກຕາມນະໂຍບາຍຂອງບໍລິສັດ, ການຄິດໄລ່ອັດຕາດອກເບ້ຍ ແລະ ຄ່າທຳນຽມຈະແຕກຕ່າງກັນກັບການໃຫ້ບໍລິການເຊົ່າສິນເຊື່ອລົດຈັກ ສ່ວນຂະບວນການຂັ້ນຕອນການດຳເນີນງານຕ່າງໆ ແມ່ນຈະຄືກັນກັບການເຊົ່າສິນເຊື່ອລົດຈັກໃໝ່.

4. ການຄຸ້ມຄອງບໍລິສັດ ແລະ ການບໍລິຫານຈັດການ

4.1 ໂຄງຮ່າງຈັດຕັ້ງຂອງບໍລິສັດ

ໂຄງຮ່າງການຈັດຕັ້ງ



4.2 ຄະນະກຳມະການ

- **ສະພາບໍລິຫານ**

ຕາຕະລາງ: ສະພາບໍລິຫານ

ລຳດັບ	ຮູບຖ່າຍ	ສະພາບໍລິຫານ (Board of Directors)	ສັນຊາດ	ຕຳແໜ່ງ
1		ທ່ານ ຊາຄຣິດ ນັກສອນ	ໄທ	ປະທານ ສະພາບໍລິຫານ
2		ທ່ານ ນາງ ອິນທະວິໄລ ອຸດົມ	ລາວ	ຮອງປະທານ ສະພາບໍລິຫານ
3		ທ່ານ ມານົບ ຕຣີລິດວິໄລ	ໄທ	ສະມາຊິກສະພາບໍລິຫານ/ຜູ້ອຳນວຍການໃຫຍ່ (Executive Director)
4		ທ່ານ ນາງ ປຣາດຖະໜາ ນັກສອນ	ໄທ	ສະມາຊິກສະພາບໍລິຫານ
5		ທ່ານ ນາງ ສຸທິດາ ນັກສອນ	ໄທ	ສະມາຊິກສະພາບໍລິຫານ
6		ທ່ານ ກຽງໄກ ນິດສະຍັນ	ໄທ	ສະມາຊິກສະພາບໍລິຫານ
7		ທ່ານ ວິນຍູ ຈີລະປະພາການ	ໄທ	ສະມາຊິກສະພາບໍລິຫານ (ອິດສະຫຼະ)
8		ທ່ານ ນັນທະພັດ ງາມປລັ່ງ	ໄທ	ສະມາຊິກສະພາບໍລິຫານ (ອິດສະຫຼະ)
9		ທ່ານ ທິຣະເມດ ອຸດທິພັດພິບູນ	ໄທ	ສະມາຊິກສະພາບໍລິຫານ (ອິດສະຫຼະ)

- **ຄະນະກຳມະການຂອງສະພາບໍລິຫານ**

ຄະນະກຳມະການຂອງສະພາບໍລິຫານ ປະກອບດ້ວຍ

1. ຄະນະກຳມະການກວດສອບ
2. ຄະນະກຳມະການຄຸ້ມຄອງຄວາມສ່ຽງ
3. ຄະນະກຳມະການຄັດເລືອກ
4. ຄະນະກຳມະການກຳນົດຄ່າຕອບແທນ
5. ຄະນະກຳມະການກວດສອບລາຍການທີ່ກ່ຽວພັນ

4.2.1 ຄະນະກຳມະການກວດສອບ

ລ/ດ	ຄະນະກຳມະການກວດສອບ	ສັນຊາດ	ຕຳແໜ່ງ
1	ທ່ານ ກອງໄກ ນິດສະຍັນ	ໄທ	ປະທານ
2	ທ່ານ ນັນທະພັດ ງາມປລັ່ງ	ໄທ	ຄະນະກຳມະການ/ ສະມາຊິກອິດສະຫຼະ
3	ທ່ານ ທິຣະເມດ ອຸດທິພັດພິບູນ	ໄທ	ຄະນະກຳມະການ/ ສະມາຊິກອິດສະຫຼະ
4	ທ່ານ ວິນຍູ ຈີລະປະພາການ	ໄທ	ຄະນະກຳມະການ/ ສະມາຊິກອິດສະຫຼະ

4.2.2 ຄະນະກຳມະການຄຸ້ມຄອງຄວາມສ່ຽງ

ລ/ດ	ຄະນະກຳມະການຄຸ້ມຄອງຄວາມສ່ຽງ	ສັນຊາດ	ຕຳແໜ່ງ
1	ທ່ານ ຊາຄຣິດ ນັກສອນ	ໄທ	ປະທານ
2	ທ່ານ ມານິບ ຕຣີລິດວິໄລ	ໄທ	ຄະນະກຳມະການ
3	ທ່ານ ທິຣະເມດ ອຸດທິພັດພິບູນ	ໄທ	ຄະນະກຳມະການ/ສະມາຊິກອິດສະຫຼະ
4	ທ່ານ ວິນຍູ ຈີລະປະພາການ	ໄທ	ຄະນະກຳມະການ/ສະມາຊິກອິດສະຫຼະ

4.2.3 ຄະນະກຳມະການຄັດເລືອກ

ລ/ດ	ຄະນະກຳມະການຄັດເລືອກ	ສັນຊາດ	ຕຳແໜ່ງ
1	ທ່ານ ຊາຄຣິດ ນັກສອນ	ໄທ	ປະທານ
2	ທ່ານ ກຽງໄກ ນິດສະຍັນ	ໄທ	ຄະນະກຳມະການ
3	ທ່ານ ນັນທະພັດ ງາມປລັ່ງ	ໄທ	ຄະນະກຳມະການ/ສະມາຊິກອິດສະຫຼະ

4.2.4 ຄະນະກຳມະການກຳນົດຄ່າຕອບແທນ

ລ/ດ	ຄະນະກຳມະການກຳນົດຄ່າຕອບແທນ	ສັນຊາດ	ຕຳແໜ່ງ
1	ທ່ານ ຊາຄຣິດ ນັກສອນ	ໄທ	ປະທານ
2	ທ່ານ ກຽງໄກ ນິດສະຍັນ	ໄທ	ຄະນະກຳມະການ
3	ທ່ານ ທິຣະເມດ ອຸດທິພັດພິບູນ	ໄທ	ຄະນະກຳມະການ/ສະມາຊິກອິດສະຫຼະ

4.2.5 ຄະນະກຳມະການກວດສອບລາຍການທີ່ກ່ຽວພັນ

ລ/ດ	ຄະນະກຳມະການຄຸ້ມຄອງລາຍການທີ່ກ່ຽວພັນ	ສັນຊາດ	ຕຳແໜ່ງ
1	ທ່ານ ທິຣະເມດ ອຸດທິພັດພິບູນ	ໄທ	ປະທານ/ສະມາຊິກອິດສະຫຼະ
2	ທ່ານ ກຽງໄກ ນິດສະຍັນ	ໄທ	ຄະນະກຳມະການ
3	ທ່ານ ນັນທະພັດ ງາມປລັ່ງ	ໄທ	ປະທານ/ສະມາຊິກອິດສະຫຼະ

5. ຜົນການດຳເນີນທຸລະກິດ

5.1 ຜົນການດຳເນີນງານດ້ານການຕະຫຼາດ

ໃນໄລຍະ 3 ເດືອນ ປີ 2022, ບໍລິສັດມີການອະນຸມັດສິນເຊື່ອລົດຈັກ ຈຳນວນ 1.921 ຄັນ ຫຼື 26.522,9 ລ້ານກີບ ເຊິ່ງເພີ່ມຂຶ້ນ 23,8 ຂອງຈຳນວນເງິນໃຫ້ສິນເຊື່ອເມື່ອທຽບກັບ ໄລຍະ 3 ເດືອນ ຂອງປີ 2021

ຕາຕະລາງ :ການອະນຸມັດສິນເຊື່ອ

ປຽບທຽບການອະນຸມັດສິນເຊື່ອລົດຈັກຂອງບໍລິສັດໃນໄລຍະ 3 ເດືອນປີ 2021 ແລະ 2022				
ລາຍການ	ໄລຍະ 3 ເດືອນ ປີ 2021	ໄລຍະ 3 ເດືອນ ປີ 2022	ປ່ຽນແປງ	ອັດຕາສ່ວນຮ້ອຍ
ຈຳນວນສັນຍາ (ຄັນ)	1.744	1.921	+177	+10,1
ຈຳນວນເງິນໃຫ້ສິນເຊື່ອ(ລ້ານກີບ)	21.420,1	26.522,9	+5.102.8	+23,8

5.2 ລາຍຮັບ

ໃນໄລຍະ 3 ເດືອນຕົ້ນປີ 2021 ແລະ ປີ 2022, ບໍລິສັດໄດ້ມີລາຍຮັບລວມທັງໝົດ 6.790,9 ລ້ານກີບ ແລະ 7.759,1 ລ້ານກີບ ຕາມລຳດັບ ເພີ່ມຂຶ້ນ +14,3 ສ່ວນຮ້ອຍ

ລາຍຮັບ	ໄລຍະ 3 ເດືອນປີ 2021		ໄລຍະ 3 ເດືອນປີ 2022		ປ່ຽນແປງ	
	ລ້ານກີບ	%	ລ້ານກີບ	%	ລ້ານກີບ	%
ດອກເບ້ຍ	6.420,8	94,6	7.433,7	95,8	+1.012,9	+15,8
ລາຍຮັບອື່ນ	370,1	5,4	325,3	4,2	-44,8	-12,1
ລວມ ລາຍຮັບ	**6.790,9**	**100,0**	**7.759,1**	**100,0**	**+968,2**	**+14,3**

5.3 ລາຍຈ່າຍ

ໃນໄລຍະ 3 ເດືອນຕົ້ນປີ 2021 ແລະ ປີ 2022, ບໍລິສັດມີລາຍຈ່າຍທັງໝົດລວມທັງຄ່າໃຊ້ຈ່າຍທາງດ້ານການເງິນຈຳນວນ 4.375,7 ລ້ານກີບ ແລະ 5.347,4 ລ້ານກີບ ຕາມລຳດັບ.

ລາຍຈ່າຍ	ໄລຍະ 3 ເດືອນ ປີ 2021		ໄລຍະ 3 ເດືອນ ປີ 2022		ປ່ຽນແປງ	
	ລ້ານກີບ	%	ລ້ານກີບ	%	ລ້ານກີບ	%
ລາຍຈ່າຍໃນການບໍລິຫານ	3.227,7	73,8	3.815,7	71,4	+588,0	+18,2
ໜີ້ສົງໃສຈະສູນ	-60,8	-1,4	338,4	6,3	+399,2	+656,6
ຂາດທຶນຈາກອັດຕາແລກປ່ຽນ	787,5	18,0	566,4	10,6	-221,1	-28,1
ລາຍຈ່າຍການເງິນ	421,3	9,6	626,9	11,7	+205,6	+48,8
ລວມ ລາຍຈ່າຍ	**4.375,7**	**100,0**	**5.347,4**	**100,0**	**+971,7**	**+22,2**

5.4 ກຳໄລສຸດທິ ແລະ ອັດຕາກຳໄລສຸດທິ

ໃນໄລຍະ 3 ເດືອນ ປີ 2021 ແລະ ປີ 2022 ບໍລິສັດມີກຳໄລສຸດທິເທົ່າກັບ 2.064,1 ລ້ານກີບ ແລະ 1.898,2 ລ້ານກີບ ຕາມລຳດັບ ຫຼື ເທົ່າກັບ 30,4 ແລະ 24,5 ສ່ວນຮ້ອຍ ຕາມລຳດັບ ເມື່ອທຽບໃສ່ລາຍຮັບລວມ, ໂດຍມີກຳໄລສຸດທິກ່ອນອາກອນ 2.415,3 ລ້ານກີບ ແລະ 2.411,7 ລ້ານກີບຕາມລຳດັບ ເຊິ່ງບໍ່ມີການປ່ຽນແປງຫຼາຍ ທັ້ງນີ້ ກຳໄລສຸດທິຫຼັງອາກອນມີການຫຼຸດລົງເນື່ອງຈາກມີການປ່ຽນອັດຕາອາກອນກຳໄລທີ່ປັບເພີ່ມຂຶ້ນຈາກ 13 ສ່ວນຮ້ອຍ ເປັນ 20 ສ່ວນຮ້ອຍ ເນື່ອງຈາກບໍລິສັດໄດ້ຮັບສິທິປະໂຫຍດດ້ານອາກອນຄົບ 4 ປີ ຕາມທີ່ກົດໝາຍກຳນົດໄວ້

5.5 ພັນທະອາກອນ

ບໍລິສັດ ມະຫະທຶນ ເຊົ່າສິນເຊື່ອ ມະຫາຊົນ ເປັນບໍລິສັດ ມະຫາຊົນ ແລະ ຈົດທະບຽນໃນ ຕະຫຼາດຫຼັກຊັບລາວ ດຳເນີນທຸລະກິດພາຍໄຕ້ກົດໝາຍຂອງ ສປປ ລາວ ດັ່ງນັ້ນ ບໍລິສັດ ມີໜ້າທີ່ ມອບພັນທະອາກອນໃຫ້ກັບລັດຖະບານລາວ ປະກອບດ້ວຍ: ອາກອນມູນຄ່າເພີ່ມ, ອາກອນ ເງິນເດືອນ ແລະ ອາກອນກຳໄລ ໃນໄລຍະ 3 ເດືອນຕົ້ນປີ 2022 ບໍລິສັດໄດ້ນຳສົ່ງອາກອນແລ້ວ ເປັນຈຳນວນ 400.1 ລ້ານກີບ ໃນນີ້ມີຄື:

ລ/ດ	ລາຍການ	ລ້ານກີບ
1	ອາກອນມູນຄ່າເພີ່ມ	104,6
2	ອາກອນເງິນເດືອນ	295,5
3	ອາກອນກຳໄລ	0,0
ລວມການມອບພັນທະອາກອນ		400,1

ຜູ້ອຳນວຍການໃຫຍ່

(ທ່ານ ນາມ ຕຣີລິດວິໄລ)

MAHATHUEN LEASING PUBLIC COMPANY
ບໍລິສັດ ມະຫະທຶນ ເຊົ່າສິນເຊື່ອ ມະຫາຊົນ

INTERIM FINANCIAL INFORMATION
(UNAUDITED)
FOR THE THREE-MONTH PERIOD ENDED 31 MARCH 2022

ເອກະສານລາຍງານການເງິນ
(ທົບທວນຄືນ)
ສຳລັບໄລຍະສາມເດືອນ ສິ້ນສຸດ ວັນທີ 31 ມີນາ 2022

ບໍລິສັດ ມະຫະທຶນ ເຊົ່າສິນເຊື່ອ ມະຫາຊົນ

ຂໍ້ມູນທົ່ວໄປຂອງບໍລິສັດ

ຄະນະບໍລິຫານ ບໍລິສັດ ມະຫະທຶນ ເຊົ່າສິນເຊື່ອ ມະຫາຊົນ (ຕໍ່ໄປນີ້ເອີ້ນວ່າ "ບໍລິສັດ") ໄດ້ມີຄວາມຍິນດີນຳສະເໜີບົດລາຍງານຂອງຕົນເອງ ແລະ ພ້ອມທັງເອກະສານລາຍງານທາງການເງິນຂອງ ບໍລິສັດສຳລັບງວດສາມເດືອນສິ້ນສຸດ ວັນທີ 31 ມີນາ 2022.

ຄວາມຮັບຜິດຊອບຂອງຄະນະບໍລິຫານຕໍ່ເອກະສານລາຍງານການເງິນ

ຄະນະບໍລິຫານມີຄວາມຮັບຜິດຊອບໃນການກະກຽມເອກະສານລາຍງານການເງິນ, ເຊິ່ງຈະຕ້ອງກະກຽມໂດຍອີງຕາມນະໂຍບາຍການບັນຊີຕາມທີ່ໄດ້ລະບຸໃນເອກະສານຊ້ອນທ້າຍຂອງເອກະສານລາຍງານການເງິນ. ນະໂຍບາຍການບັນຊີເຫຼົ່ານີ້ ແມ່ນບໍ່ໄດ້ມີຈຸດປະເພື່ອນຳສະເໜີຖານະທາງການເງິນ, ຜົນຂອງການດຳເນີນທຸລະກິດ ແລະ ກະແສເງິນສົດຂອງບໍລິສັດ ໂດຍສອດຄ່ອງຕາມຫຼັກການບັນຊີສາກົນທີ່ຖືກຍອມຮັບໂດຍທົ່ວໄປ. ໃນການກະກຽມເອກະສານລາຍງານ, ຄະນະບໍລິຫານ ຕ້ອງ:

- ເລືອກເຟັ້ນເອົານະໂຍບາຍການບັນຊີທີ່ເໝາະສົມ ແລະ ນຳໃຊ້ຢ່າງສອດຄ່ອງ
- ພິຈາລະນາ ແລະ ຄາດຄະເນຢ່າງສົມເຫດສົມຜົນ ແລະ ລະອຽດຮອບຄອບ
- ຖະແຫຼງການວ່າບັນດາມາດຕະຖານການບັນຊີທີ່ກ່ຽວຂ້ອງໄດ້ຖືກປະຕິບັດ, ທຸກຂໍ້ຂັດແຍ່ງ ຫຼື ການລະເມີດທີ່ສຳຄັນຕໍ່ກັບມາດຕະຖານການບັນຊີຕ້ອງຖືກນຳມາເປີດເຜີຍ ແລະ ອະທິບາຍໃນເອກະສານລາຍງານການເງິນ
- ກະກຽມເອກະສານລາຍງານການເງິນບົນພື້ນຖານຄວາມສືບເນື່ອງໃນການດຳເນີນທຸລະກິດ, ຍົກເວັ້ນໃນກໍລະນີທີ່ບໍລິສັດຫາກຕັ້ງຂໍ້ສົມມຸດຖານ ຫຼື ຄາດຄະເນວ່າທຸລະກິດຈະບໍ່ສາມາດດຳເນີນຕໍ່ໄປໄດ້.

ຄະນະບໍລິຫານມີຄວາມຮັບຜິດຊອບໃນການຮັບປະກັນວ່າບັນດາຂໍ້ມູນທາງດ້ານບັນຊີທີ່ຖືກບັນທຶກໄວ້ໃນໄດ້ສະແດງເຖິງຄວາມຖືກຕ້ອງຢ່າງເໝາະສົມຢູ່ຕະຫຼອດເວລາກ່ຽວກັບຖານະການເງິນຂອງ ບໍລິສັດ ໃນມື້ທີ່ປິດບັນຊີພ້ອມທັງຮັບປະກັນວ່າ ເອກະສານລາຍງານການເງິນໄດ້ສອດຄ່ອງກັບນະໂຍບາຍທາງດ້ານບັນຊີທີ່ເໝາະສົມ.ຄະນະບໍລິຫານຍັງມີຄວາມຮັບຜິດຊອບໃນການຮັກສາຊັບສິນຂອງ ບໍລິສັດ ແລະ ຕ້ອງມີຂັ້ນຕອນທີ່ເໝາະສົມໃນການປ້ອງກັນ ແລະ ຊອກຫາຄວາມບໍ່ໂປ່ງໃສ ແລະ ສິ່ງຜິດປົກກະຕິອື່ນໆ.

ຄະນະບໍລິຫານຢັ້ງຢືນວ່າໄດ້ປະຕິບັດຕາມທຸກຂໍ້ກຳນົດຂ້າງເທິງໃນການກະກຽມເອກະສານລາຍງານການເງິນສະບັບນີ້.

ການອະນຸມັດເອກະສານລາຍງານການເງິນ

ພວກຂ້າພະເຈົ້າຕົກລົງເຫັນດີອະນຸມັດຮັບຮອງເອົາເອກະສານລາຍງານການເງິນນະວັນທີ 31 ມີນາ 2022 ແລະ ສຳລັບປີທີ່ສິ້ນສຸດວັນທີດັ່ງກ່າວທີ່ຖືກກະກຽມໂດຍອີງຕາມນະໂຍບາຍການບັນຊີທີ່ໄດ້ລະບຸໄວ້ໃນບົດອະທິບາຍຊ້ອນທ້າຍຂອງເອກະສານລາຍງານການເງິນ

ໃນນາມຄະນະບໍລິຫານ

ທ່ານ ຍານິບ ຕຣີລິດວິໄລ
ຜູ້ອຳນວຍການໃຫ່ຍ
27 ເມສາ 2022

ບໍລິສັດ ມະຫະທຶນ ເຊົ່າສິນເຊື່ອ ມະຫາຊົນ

ໃບລາຍງານຖານະການເງິນ
ໃນວັນທີ 31 ມີນາ 2022

	ບົດ ອະທິບາຍ	"ບໍ່ໄດ້ກວດສອບ" 31 ມີນາ 2022 ກີບ	"ກວດສອບ" 31 ທັນວາ 2021 ກີບ
ຊັບສິນ			
ຊັບສິນໝຸນວຽນ			
ເງິນສົດ ແລະ ລາຍການທຽບເທົ່າເງິນສົດ	4	2,540,152,421	13,057,187,126
ສັດສ່ວນໝຸນວຽນຂອງໜີ້ຕ້ອງຮັບສັນຍາເຊົ່າການເງິນ ແລະ ລູກໜີ້ສິນເຊື່ອຜ່ອນຊຳລະ, ສຸດທິ	5	52,434,513,969	47,696,091,192
ຊັບສິນຖືໄວ້ເພື່ອຂາຍ, ສຸດທິ	6	214,602,779	262,786,334
ຊັບສິນໝຸນວຽນອື່ນໆ	7	715,356,304	503,095,189
ລວມຊັບສິນໝຸນວຽນ		55,904,625,473	61,519,159,841
ຊັບສິນບໍ່ໝຸນວຽນ			
ເງິນຝາກທີ່ທະນາຄານແຫ່ງ ສປປ ລາວ		2,000,002,700	2,000,002,700
ໜີ້ຕ້ອງຮັບຈາກສັນຍາເຊົ່າການເງິນ ແລະ ລູກໜີ້ສິນເຊື່ອຜ່ອນຊຳລະ, ສຸດທິ	5	37,966,748,354	32,091,186,121
ຊັບສິນຄົງທີ່ມີຕົວຕົນ, ສຸດທິ	8	852,166,678	939,382,351
ຊັບສິນຄົງທີ່ບໍ່ມີຕົວຕົນ, ສຸດທິ	9	186,922,037	205,780,698
ຊັບສິນບໍ່ໝຸນວຽນ ອື່ນໆ		141,968,556	174,497,244
ລວມຊັບສິນບໍ່ໝຸນວຽນ		41,147,808,325	35,410,849,114
ລວມຊັບສິນ		97,052,433,798	96,930,008,955

ທ່ານ ມານິບ ຕຣີລິດວິໄລ
ຜູ້ອຳນວຍການໃຫ່ຍ

ວັນທີ: 27 ເມສາ 2022

ທ່ານ ທອງຖະຫວັນ ທອງແຖມ
ຜູ້ອຳນວຍການຝ່າຍການເງິນ

ວັນທີ: 27 ເມສາ 2022

ບົດອະທິບາຍຊ້ອນທ້າຍ ແຕ່ໜ້າທີ 7-16 ແມ່ນສ່ວນໜຶ່ງ ຂອງເອກະສານລາຍງານການເງິນສະບັບນີ.

ບໍລິສັດ ມະຫະທຶນ ເຊົ່າສິນເຊື່ອ ມະຫາຊົນ

ໃບລາຍງານຖານະການເງິນ
ໃນວັນທີ 31 ມີນາ 2022

	ບົດ ອະທິບາຍ	"ບໍ່ໄດ້ກວດສອບ" 31 ມີນາ 2022 ກີບ	"ກວດສອບ" 31 ທັນວາ 2021 ກີບ
ໜີ້ສິນ ແລະ ທຶນເຈົ້າຂອງ			
ໜີ້ສິນ			
ໜີ້ສິນໝຸນວຽນ			
ໜີ້ຕ້ອງສົ່ງທາງການຄ້າ ແລະ ໜີ້ຕ້ອງສົ່ງອື່ນໆ	10	2,484,876,194	4,580,752,344
ໜີ້ຕ້ອງສົ່ງອາກອນລາຍໄດ້		1,438,852,277	2,041,935,197
ໜີ້ສິນໝຸນວຽນອື່ນໆ		42,317,780	44,011,600
ລວມໜີ້ສິນໝຸນວຽນ		3,966,046,251	6,666,699,141
ໜີ້ສິນບໍ່ໝຸນວຽນ			
ເງິນກູ້ຢືມ	11	18,811,200,000	17,894,400,000
ໜີ້ສິນບໍ່ໝຸນວຽນອື່ນໆ		225,325,000	217,250,000
ລວມໜີ້ສິນບໍ່ໝຸນວຽນ		19,036,525,000	18,111,650,000
ລວມໜີ້ສິນ		23,002,571,251	24,778,349,141
ທຶນເຈົ້າຂອງ			
ທຶນຈົດທະບຽນ		40,000,000,000	40,000,000,000
ສ່ວນເພີ່ມມູນຄ່າຮຸ້ນ		12,832,667,550	12,832,667,550
ກຳໄລສະສົມ			
ຄ້າງສະສົມຕາມລະບຽບການ	12	4,785,832,107	4,785,832,107
ກຳໄລສະສົມ ທີ່ຍັງບໍ່ໄດ້ຈັດສັນ		16,431,362,890	14,533,160,157
ລວມທຶນ		74,049,862,547	72,151,659,814
ລວມໜີ້ສິນ ແລະ ທຶນເຈົ້າຂອງ		97,052,433,798	96,930,008,955

ທ່ານ ມານີ ຕຣີລິດວິໄລ
ຜູ້ອຳນວຍການໃຫ່ຍ

ວັນທີ: 27 ເມສາ 2022

ທ່ານ ທອງຖະຫວັນ ທອງແຖມ
ຜູ້ອຳນວຍການຝ່າຍການເງິນ

ວັນທີ: 27 ເມສາ 2022

ບົດອະທິບາຍຊ້ອນທ້າຍ ແຕ່ໜ້າທີ 7-16 ແມ່ນສ່ວນໜຶ່ງ ຂອງເອກະສານລາຍງານການເງິນສະບັບນີ.

ບໍລິສັດ ມະຫະທຶນ ເຊົ່າສິນເຊື່ອ ມະຫາຊົນ

ໃບລາຍງານຜົນໄດ້ຮັບ
ສຳລັບງວດສາມເດືອນສິ້ນສຸດວັນທີ 31 ມີນາ 2022

	ບົດ ອະທິບາຍ	"ບໍ່ໄດ້ກວດສອບ" 31 ມີນາ 2022 ກີບ	"ບໍ່ໄດ້ກວດສອບ" 31 ມີນາ 2021 ກີບ
ລາຍຮັບຈາກດອກເບ້ຍ - ສັນຍາເຊົ່າການເງິນ ແລະ ສິນເຊື່ອຜ່ອນຊຳລະ		7,433,735,555	6,420,828,106
ລວມລາຍຮັບ		7,433,735,555	6,420,828,106
ລາຍຮັບອື່ນ	15	325,342,531	370,125,726
ລາຍຈ່າຍໃນການບໍລິຫານ	16	(3,815,706,704)	(3,227,698,324)
ໜີ້ເສຍ ແລະ ໜີ້ຕ້ອງຮັບທວງຍາກ		(338,378,024)	60,784,859
ຂາດທຶນສຸດທິຈາກອັດຕາແລກປ່ຽນ		(566,427,858)	(787,488,868)
ກຳໄລຈາກການດຳເນີນງານ		3,038,565,500	2,836,551,499
ລາຍຈ່າຍການເງິນ		(626,860,641)	(421,261,917)
ກຳໄລສຸດທິກ່ອນອາກອນ		2,411,704,859	2,415,289,582
ລາຍຈ່າຍອາກອນ	17	(513,502,126)	(350,674,067)
ກຳໄລສຸດທິ		1,898,202,733	2,064,615,515
ກຳໄລ ຕໍ່ຮຸ້ນ			
ກຳໄລຜືນຖານຕໍ່ຮຸ້ນ	13	4.75	5.16

ທ່ານ ນາມີ ຕຣິລິກວິໄລ
ຜູ້ອຳນວຍການໃຫ່ຍ

ວັນທີ: 27 ເມສາ 2022

ທ່ານ ທອງຖະຫວັນ ທອງແຖມ
ຜູ້ອຳນວຍການຝ່າຍການເງິນ

ວັນທີ: 27 ເມສາ 2022

ບົດອະທິບາຍຊ້ອນທ້າຍ ແຕ່ໜ້າທີ 7-16 ແມ່ນສ່ວນໜຶ່ງ ຂອງເອກະສານລາຍງານການເງິນສະບັບນີ.

ບໍລິສັດ ມະຫະທຶນ ເຊົ່າສິນເຊື່ອ ມະຫາຊົນ

ໃບລາຍງານສ່ວນປ່ຽນແປງທຶນເຈົ້າຂອງ
ສຳລັບງວດສາມເດືອນສິ້ນສຸດວັນທີ 31 ມີນາ 2022

	ບົດອະທິບາຍ	ທຶນຈົດທະບຽນ ກີບ	ສ່ວນເພີ່ມມູນຄ່າຮຸ້ນ ກີບ	ກຳໄລສະສົມ ຄັງສະສົມຕາມລະບຽບການຈັດສັນແລ້ວ ກີບ	ກຳໄລສະສົມ ທີ່ຍັງບໍ່ໄດ້ຈັດສັນ ກີບ	ລວມ ກີບ
ໃນວັນທີ 1 ມັງກອນ 2021		40,000,000,000	12,832,667,550	4,026,672,320	13,900,722,075	70,760,061,945
ກຳໄລສຳລັບງວດ	13	-	-	-	2,064,615,515	2,064,615,515
ໃນວັນທີ 31 ມີນາ 2021		40,000,000,000	12,832,667,550	4,026,672,320	15,965,337,590	72,824,677,460
ໃນວັນທີ 1 ມັງກອນ 2022		40,000,000,000	12,832,667,550	4,785,832,107	14,533,160,157	72,151,659,814
ກຳໄລສຳລັບງວດ	13	-	-	-	1,898,202,733	1,898,202,733
ໃນວັນທີ 31 ມີນາ 2022		40,000,000,000	12,832,667,550	4,785,832,107	16,431,362,890	74,049,862,547

ທ່ານ ມານີ ຕຣີລິດວິໄລ
ຜູ້ອຳນວຍການໃຫ່ຍ

ວັນທີ: 27 ເມສາ 2022

ທ່ານ ທອງຖະຫວັນ ທອງແຖມ
ຜູ້ອຳນວຍການຝ່າຍການເງິນ

ວັນທີ: 27 ເມສາ 2022

ບົດອະທິບາຍຊ້ອນທ້າຍ ແຕ່ໜ້າທີ 7-16 ແມ່ນສ່ວນໜຶ່ງ ຂອງເອກະສານລາຍງານການເງິນສະບັບນີ້.

ໃບລາຍງານກະແສເງິນສົດ
ສຳລັບງວດສາມເດືອນສິ້ນສຸດວັນທີ 31 ມີນາ 2022

	ບົດ ອະທິບາຍ	"ບໍ່ໄດ້ກວດສອບ" 31 ມີນາ 2022 ກີບ	"ບໍ່ໄດ້ກວດສອບ" 31 ມີນາ 2021 ກີບ
ກະແສເງິນສົດຈາກກິດຈະກຳການດຳເນີນງານ:			
ກຳໄລກ່ອນອາກອນ		2,411,704,859	2,415,289,582
ດັດແກ້ເພື່ອສົມທຽບກຳໄລສຸດທິ ແລະ ເງິນສົດສຸດທິ			
ໜີ້ສົງໄສຈະເສຍ ແລະ ໜີ້ສູນ		338,378,024	(60,784,859)
ຄ່າບາຍໜ້າລໍຖ້າຕັດບັນຊີ		1,003,977,686	974,342,237
ຂາດທຶນຈາກການສູນເສຍມູນຄ່າຂອງຊັບສິນລໍຖ້າຂາຍ		(6,250,000)	5,000,000
ຄ່າຫຼຸ້ຍຫ້ຽນ	8,9	137,016,286	132,350,651
ລາຍຈ່າຍການເງິນ		626,860,641	421,261,917
ຂາດທຶນຈາກອັດຕາແລກປ່ຽນ		750,527,526	638,464,606
ກຳໄລຈາກການດຳເນີນງານກ່ອນການປ່ຽນແປງທຶນໝຸນວຽນ		**5,262,215,022**	**4,525,924,134**
ການປ່ຽນແປງທຶນໝຸນວຽນ:			
ໜີ້ຕ້ອງຮັບຈາກສັນຍາເຊົ່າທາງການເງິນ ແລະ ລູກໜີ້ສິນເຊື່ອຜ່ອນຊຳລະ		(10,485,996,982)	(5,517,875,156)
ຊັບສິນຖືໄວ້ເພື່ອຂາຍ		54,433,555	(37,367,096)
ຊັບສິນໝຸນວຽນ ແລະ ບໍ່ໝຸນວຽນອື່ນໆ		(179,732,429)	(223,467,178)
ໜີ້ຕ້ອງສົ່ງການຄ້າ ແລະ ໜີ້ຕ້ອງສົ່ງອື່ນໆ		(2,095,876,150)	(484,417,462)
ໜີ້ສິນໝຸນວຽນອື່ນໆ		(1,890,632)	(687,862)
ໜີ້ສິນບໍ່ໝຸນວຽນອື່ນໆ		8,075,000	36,125,000
ເງິນສົດຈາກກິດຈະກຳດຳເນີນງານ		**(7,438,772,616)**	**(1,701,765,620)**
ລາຍຈ່າຍຄ່າບາຍໜ້າ		(1,440,750,000)	(1,279,500,000)
ລາຍຈ່າຍດອກເບ້ຍ		(626,860,641)	(788,811,221)
ລາຍຈ່າຍອາກອນ		(1,116,585,046)	(290,000,000)
ເງິນສົດສຸດທິຈາກ/(ໃຊ້ໄປໃນ)ກິດຈະກຳດຳເນີນງານ		**(10,622,968,303)**	**(4,060,076,841)**

ທ່ານ ມານິບ ຕຣີສິດວິໄລ
ຜູ້ອຳນວຍການໃຫ່ຍ

ວັນທີ: 27 ເມສາ 2022

ທ່ານ ທອງຖະຫວັນ ທອງແຖມ
ຜູ້ອຳນວຍການຝ່າຍການເງິນ

ວັນທີ: 27 ເມສາ 2022

ບົດອະທິບາຍຊ້ອນທ້າຍ ແຕ່ໜ້າທີ 7-16 ແມ່ນສ່ວນໜຶ່ງ ຂອງເອກະສານລາຍງານການເງິນສະບັບນີ້.

ໃບລາຍງານກະແສເງິນສົດ
ສຳລັບງວດສາມເດືອນສິ້ນສຸດວັນທີ 31 ມີນາ 2022

	ບົດ ອະທິບາຍ	"ບໍ່ໄດ້ກວດສອບ" 31 ມີນາ 2022 ກີບ	"ບໍ່ໄດ້ກວດສອບ" 31 ມີນາ 2021 ກີບ
ກະແສເງິນສົດຈາກກິດຈະກຳການລົງທຶນ			
ເງິນສົດຈ່າຍຊື້ຊັບສິນບັດຄົງທີ່ມີຕົວຕົນ	8	(30,941,950)	(60,791,560)
ເງິນສົດຈ່າຍຊື້ຊັບສິນບັດຄົງທີ່ບໍ່ມີຕົວຕົນ		-	(39,480,000)
ເງິນສົດສຸດທິໃຊ້ໄປໃນກິດຈະກຳການລົງທຶນ		(30,941,950)	(100,271,560)
ກະແສເງິນສົດຈາກກິດຈະກຳການເງິນ			
ຊຳລະຄືນໜີ້ສິນ ພາຍໃຕ້ສັນຍາເຊົ່າທາງການເງິນ		-	(78,339,545)
ເງິນສົດສຸດທິໃຊ້ໄປໃນກິດຈະກຳການເງິນ		-	(78,339,545)
ເພີ່ມຂຶ້ນສຸດທິໃນເງິນສົດ ແລະ ລາຍການທຽບເທົ່າເງິນສົດ		(10,653,910,253)	(4,238,687,946)
ເງິນສົດ ແລະ ລາຍການທຽບເທົ່າເງິນສົດຕົ້ນງວດ		13,057,187,126	12,404,353,323
ກຳໄລການແລກປ່ຽນຈາກເງິນສົດ ແລະ ລາຍການທຽບເທົ່າເງິນສົດ		136,875,548	8,441,488
ເງິນສົດ ແລະ ລາຍການທຽບເທົ່າເງິນສົດທ້າຍງວດ	4	2,540,152,421	8,174,106,865

ທ່ານ ມານິບ ຕຣີລິດວິໄລ
ຜູ້ອຳນວຍການໃຫ່ຍ

ວັນທີ: 27 ເມສາ 2022

ທ່ານ ທອງຖະຫວ້ນ ທອງແຖມ
ຜູ້ອຳນວຍການຝ່າຍການເງິນ

ວັນທີ: 27 ເມສາ 2022

ບົດອະທິບາຍຊ້ອນທ້າຍ ແຕ່ໜ້າທີ 7-16 ແມ່ນສ່ວນໜຶ່ງ ຂອງເອກະສານລາຍງານການເງິນສະບັບນີ້.

1 ຂໍ້ມູນທົ່ວໄປ

ບໍລິສັດ ມະຫະທຶນ ເຊົ່າສິນເຊື່ອ ມະຫາຊົນ (ບໍລິສັດ) ແມ່ນ ບໍລິສັດທີ່ໄດ້ຈົດທະບຽນໃນຕະຫລາດຫຼັກຊັບລາວ ແລະ ທີ່ໄດ້ຈົດທະບຽນ ຕັ້ງຢູ່ໃນ ສປປ ລາວ. ບໍລິສັດໄດ້ຈົດທະບຽນສ້າງຕັ້ງ ກັບກະຊວງອຸດສາຫະກຳ ແລະ ການຄ້າ ໃນວັນທີ 2 ກັນຍາ 2011. ບໍລິສັດໄດ້ເລີ່ມດຳເນີນທຸລະກິດພາຍຫຼັງທີ່ໄດ້ຮັບໃບອະນຸຍາດຈາກທະນາຄານແຫ່ງ ສປປ ລາວ ໃນວັນທີ 11 ມິຖຸນາ 2012.

ເມື່ອວັນທີ 13 ມິຖຸນາ 2018, ບໍລິສັດ ໄດ້ຮັບອະນຸຍາດຈາກຄະນະກຳມະການຄຸ້ມຄອງຫຼັກຊັບລາວ ໃຫ້ຈຳໜ່າຍຮຸ້ນແກ່ປະຊາຊົນທົ່ວໄປເປັນຄັ້ງທຳອິດ.

ສຳນັກງານໃຫຍ່ຂອງບໍລິສັດ ຕັ້ງຢູ່ເຮືອນເລກທີ 628, ບ້ານໂພນພະເນົາ, ກິໂລແມັດ 5, ຖະໜົນໄກສອນພົມວິຫານ, ເມືອງໄຊເສດຖາ, ນະຄອນຫຼວງວຽງຈັນ, ສປປ ລາວ.

ກິດຈະກຳຫຼັກ ຂອງບໍລິສັດແມ່ນການສະໜອງສິນເຊື່ອສຳລັບລູກຄ້າລາຍຍ່ອຍໂດຍການໃຫ້ສິນເຊື່ອແກ່ລູກຄ້າລາຍບຸກຄົນເພື່ອຊື້ລົດຈັກແລະລົດໄຖ

ເອກະສານລາຍງານການເງິນ ໄດ້ມີການອະນຸມັດໃຫ້ອອກບົດລາຍງານ ໂດຍ ຄະນະບໍລິຫານໃນວັນທີ 27 ເມສາ 2022.

2 ພື້ນຖານໃນການກະກຽມບົດລາຍງານ ແລະ ນະໂຍບາຍການບັນຊີ

ເອກະສານລາຍງານການເງິນການປີໄດ້ຖືກສ້າງຂຶ້ນໂດຍອີງຕາມນະໂຍບາຍການບັນຊີ ຂອງບໍລິສັດດັ່ງທີ່ໄດ້ອະທິບາຍໄວ້ໃນລາຍລະອຽດເພີ່ມເຕີມໃນເອກະສານລາຍງານການເງິນປະຈຳປີ ສຳລັບປີສິ້ນສຸດ ວັນທີ 31 ທັນວາ 2021. ເອກະສານລາຍງານການເງິນຫຼັກເຊັ່ນ: ໃບລາຍງານຖານະການເງິນ, ໃບລາຍງານຜົນໄດ້ຮັບ, ໃບລາຍງານສ່ວນປ່ຽນແປງທຶນຂອງຕົນເອງ ແລະ ໃບລາຍງານກະແສເງິນສົດ ຖືກນຳສະເໜີໃນຮູບແບບທີ່ສອດຄ່ອງກັບເອກະສານລາຍງານການເງິນປະຈຳປີໂດຍປະຕິບັດຕາມລະບຽບການລາຍງານ ແລະ ການເປີດເຜີຍທີ່ອອກໂດຍ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ.

ເອກະສານລາຍງານການເງິນສະບັບນີ້ ຄວນອ່ານຄູ່ກັບເອກະສານລາຍງານການເງິນປະຈຳປີ ສຳລັບປີສິ້ນສຸດ 31 ທັນວາ 2021.

ຫຼັກການບັນຊີທີ່ນຳໃຊ້ອາດຈະແຕກຕ່າງຈາກມາດຕະຖານການລາຍງານການເງິນສາກົນ (IFRS). ໃນຂອບເຂດທີ່ມີຄວາມແຕກຕ່າງທີ່ມີສາລະສຳຄັນເຊັ່ນ, ສັນຍາເຊົ່າ, ຜົນປະໂຫຍດຂອງພະນັກງານ, ຜົນກະທົບຂອງການປ່ຽນແປງຂອງອັດຕາແລກປ່ຽນເງິນຕາຕ່າງປະເທດ, ອາກອນລາຍໄດ້ ແລະ ອາກອນລາຍໄດ້ເລື່ອນຊຳລະ, ເຄື່ອງມືການເງິນ ແລະ ຄ່າໃຊ້ຈ່າຍກ່ອນການດຳເນີນງານ.

ໃນການກະກຽມເອກະສານລາຍງານການເງິນ ຮຽກຮ້ອງໃຫ້ຜູ້ບໍລິຫານຕ້ອງໃຊ້ການຄາດຄະເນ ແລະ ຕັ້ງຂໍ້ສົມມຸດທີ່ມີຜົນກະທົບຕໍ່ຊັບສິນ ແລະ ໜີ້ສິນທີ່ຖືກລາຍງານ, ການເປີດເຜີຍຊັບສິນ ແລະ ໜີ້ສິນທີ່ອາດເກີດຂຶ້ນ ໃນວັນທີຂອງເອກະສານລາຍງານການເງິນ, ລາຍຮັບ ແລະ ລາຍຈ່າຍໃນໄລຍະເວລາທີ່ລາຍງານ, ເຖິງແມ່ນວ່າການຄາດຄະເນເຫຼົ່ານີ້ແມ່ນອີງໃສ່ຄວາມຮູ້ຂອງຜູ້ບໍລິຫານກ່ຽວກັບເຫດການ ແລະ ການກະທຳໃນປະຈຸບັນກໍ່ຕາມ, ແຕ່ຜົນໄດ້ຮັບຕົວຈິງອາດຈະແຕກຕ່າງຈາກການຄາດຄະເນເຫຼົ່ານັ້ນ.

3 ການຄາດຄະເນ

ການສ້າງເອກະສານລາຍງານການເງິນ ແມ່ນຮຽກຮ້ອງໃຫ້ຜູ້ບໍລິຫານໃຊ້ດຸນພິນິດ, ການຄາດຄະເນ ແລະ ການສົມມຸດຕິຖານທີ່ມີຜົນກະທົບຕໍ່ນະໂຍບາຍການບັນຊີ ແລະ ການລາຍງານຕົວເລກ ຂອງຊັບສິນ ແລະ ໜີ້ສິນ, ລາຍຮັບ ແລະ ລາຍຈ່າຍ ເຊິ່ງໃນຄວາມເປັນຈິງອາດຈະມີຄວາມແຕກຕ່າງຈາກການຄາດຄະເນໄວ້.

ໃນການກະກຽມເອກະສານລາຍງານສະບັບນີ້, ຜູ້ບໍລິຫານໄດ້ຕັດສິນໃຈທີ່ມີສຳລະສຳຄັນຂອງນະໂຍບາຍການບັນຊີ ຂອງບໍລິສັດ ແລະ ແຫຼ່ງທີ່ມາທີ່ສຳຄັນຂອງຄວາມບໍ່ແນ່ນອນຂອງການປະມານການເຊັ່ນດຽວກັບທີ່ໃຊ້ກັບເອກະສານລາຍງານການເງິນສຳລັບປີສິ້ນສຸດວັນທີ 31 ທັນວາ 2021.

4 ເງິນສົດ ແລະ ລາຍການທຽບເທົ່າເງິນສົດ

	ທົບທວນຄືນ 31 ມີນາ 2022 ກີບ	ກວດສອບ 31 ທັນວາ 2021 ກີບ
ເງິນສົດໃນມື	17.898.619	41.035.623
ເງິນສົດໃນທະນາຄານ	2.522.253.802	13.016.151.503
ລວມ	**2.540.152.421**	**13.057.187.126**

5 ໜີ້ຕ້ອງຮັບສັນຍາເຊົ່າການເງິນ ແລະ ລູກໜີ້ສິນເຊື່ອຜ່ອນຊຳລະ, ສຸດທິ

	ທົບທວນຄືນ 31 ມີນາ 2022 ກີບ	ກວດສອບ 31 ທັນວາ 2021 ກີບ
ໝຸນວຽນ		
ສັດສ່ວນໝຸນວຽນຂອງໜີ້ຕ້ອງຮັບຈາກສັນຍາເຊົ່າທາງການເງິນ	1.179.888.374	1.142.390.791
ສັດສ່ວນໝຸນວຽນຂອງລູກໜີ້ສິນເຊື່ອຜ່ອນຊຳລະ	54.217.582.412	49.443.374.420
	55.397.470.786	**50.585.765.211**
ເພີ່ມ ຕົ້ນທຶນທາງກົງ	1.575.276.031	1.366.237.006
ຫັກ ເງິນແຮະບ້ວງໜີ້ຕ້ອງຮັບທີ່ເກັບຄືນບໍ່ໄດ້	(4.538.232.848)	(4.255.911.025)
	52.434.513.969	**47.696.091.192**
ບໍ່ໝຸນວຽນ		
ໜີ້ຕ້ອງຮັບຈາກສັນຍາເຊົ່າທາງການເງິນ	464.005.836	323.369.606
ລູກໜີ້ສິນເຊື່ອຜ່ອນຊຳລະ	36.584.275.727	31.017.898.812
	37.048.281.563	**31.341.268.418**
ເພີ່ມ ຕົ້ນທຶນທາງກົງ	1.521.449.899	1.293.716.612
ຫັກ ເງິນແຮະບ້ວງໜີ້ຕ້ອງຮັບທີ່ເກັບຄືນບໍ່ໄດ້	(602.983.108)	(543.798.909)
	37.966.748.354	**32.091.186.121**
ລວມ	**90.401.262.323**	**79.787.277.313**

ໃນວັນທີ 31 ມີນາ 2022, ໜີ້ຕ້ອງຮັບສັນຍາເຊົ່າການເງິນ ແລະ ໜີ້ຕ້ອງຮັບເງິນກູ້ຜ່ອນຊຳລະໃນໃບລາຍງານຖານະການເງິນ, ສາມາດວິເຄາະອາຍຸການໄດ້ດັ່ງນີ້:

	ທົບທວນຄືນ 31 ມີນາ 2022 ກີບ	ກວດສອບ 31 ທັນວາ 2021 ກີບ
ບໍ່ຄົບກຳນົດ	70.584.351.002	59.043.910.017
1 - 3 ເດືອນ	15.555.586.159	16.691.343.418
4 - 6 ເດືອນ	1.421.689.433	1.812.386.831
7 - 12 ເດືອນ	1.617.092.723	1.394.089.145
ເກີນ 12 ເດືອນ	3.267.033.032	2.985.304.218
	92.445.752.349	**81.927.033.629**
ເພີ່ມ ຕົ້ນທຶນທາງກົງ	3.096.725.930	2.659.953.618
ຫັກ ເງິນແຮະບ້ອງໜີ້ຕ້ອງຮັບທີ່ເກັບຄືນບໍ່ໄດ້	(5.141.215.956)	(4.799.709.934)
ລວມ	**90.401.262.323**	**79.787.277.313**

6 ຊັບສິນຖືໄວ້ເພື່ອຂາຍ, ສຸດທິ

	ທົບທວນຄືນ 31 ມີນາ 2022 ກີບ	ກວດສອບ 31 ທັນວາ 2021 ກີບ
ລິດຈັນ	237.102.779	291.536.334
ຫັກ ເງິນແຮການສູນເສຍມູນຄ່າຂອງຊັບສິນຖືໄວ້ເພື່ອຂາຍ	(22.500.000)	(28.750.000)
ລວມ	**214.602.779**	**262.786.334**

7 ຊັບສິນໝຸນວຽນອື່ນໆ

	ທົບທວນຄືນ 31 ມີນາ 2022 ກີບ	ກວດສອບ 31 ທັນວາ 2021 ກີບ
ລາຍຈ່າຍລ່ວງໜ້າ	437.101.114	449.969.869
ຊຳລະເງິນລ່ວງໜ້າ	253.891.650	42.757.320
ໜີ້ຕ້ອງຮັບອາກອນມູນຄ່າເພີ່ມ	4.117.540	-
ອື່ນໆ	20.246.000	10.368.000
ລວມ	**715.356.304**	**503.095.189**

8 ຊັບສິນຄົງທີ່ມີຕົວຕົນ, ສຸດທິ

	ກີບ
ໃນວັນທີ 1 ມັງກອນ 2022 - ກວດສອບ	939.382.352
ເພີ່ມຂຶ້ນ	30.941.950
ຫັກ: ຄ່າຫຼ້ຍຫ້ຽນ	(118.157.624)
ມູນຄ່າຕາມບັນຊີສຸດທິ ໃນວັນທີ 31 ມີນາ 2022 - ທົບທວນຄືນ	**852.166.678**

9 ຊັບສິນບໍ່ມີຕົວຕົນ, ສຸດທິ

	ກີບ
ໃນວັນທີ 1 ມັງກອນ 2022 - ກວດສອບ	205.780.698
ເພີ່ມຂຶ້ນ	-
ຫັກ: ຄ່າເສື່ອມມູນຄ່າ	(18.858.661)
ມູນຄ່າຕາມບັນຊີສຸດທິ ໃນວັນທີ 31 ມີນາ 2022 - ທົບທວນຄືນ	**186.922.037**

10 ໜີ້ຕ້ອງສິ່ງທາງການຄ້າ ແລະ ໜີ້ຕ້ອງສິ່ງອື່ນໆ

	ທົບທວນຄືນ 31 ມີນາ 2022 ກີບ	ກວດສອບ 31 ທັນວາ 2021 ກີບ
ໜີ້ຕ້ອງສິ່ງທາງການຄ້າ - ພາກສ່ວນທີ່ກ່ຽວຂ້ອງ (ບົດອະທິບາຍ 18)	201.333.000	313.206.000
ໜີ້ຕ້ອງສິ່ງທາງການຄ້າ	1.331.362.000	2.727.309.000
ໜີ້ຕ້ອງສິ່ງອື່ນໆ - ພາກສ່ວນທີ່ກ່ຽວຂ້ອງ (ບົດອະທິບາຍ18)	67.750.000	38.750.000
ໜີ້ຕ້ອງສິ່ງອາກອນ	60.467.614	49.788.674
ຄ່າໃຊ້ຈ່າຍຄ້າງຈ່າຍ	823.963.580	1.451.698.670
ລວມ	**2.484.876.194**	**4.580.752.344**

11. ເງິນກູ້ຢືມໄລຍະຍາວ

ລາຍການເຄື່ອນໄຫວຂອງເງິນກູ້ຢືມ ສຳລັບໄລຍະສາມເດືອນສິ້ນສຸດ ວັນທີ 31 ມີນາ 2022 ມີດັ່ງລຸ່ມນີ້:

	ທົບທວນຄືນ 31 ມີນາ 2022 ກີບ	ກວດສອບ 31 ທັນວາ 2021 ກີບ
ຍອດຍົກມາມູນຄ່າຕາມບັນຊີ, ສຸດທິ	17.894.400.000	11.936.400.000
ເງິນກູ້ຢືມທີ່ເພີ່ມ	-	4.083.200.000
ຊຳລະເງິນກູ້ຢືມຄືນ	-	-
ຂາດທຶນຈາກການຕີມູນຄ່າການແລກປ່ຽນ	916.800.000	1.874.800.000
ຍອດເຫຼືອມູນຄ່າຕາມບັນຊີ, ສຸດທິ	**18.811.200.000**	**17.894.400.000**

12. ຄັງສະສົມຕາມລະບຽບການ

ຄັງສະສົມຕາມລະບຽບການ ແມ່ນສ້າງຂຶ້ນຕາມກົດໝາຍວິສາຫະກິດຂອງ ສປປ ລາວ ຕາມມາດຕາ 156 ເຊິ່ງກຳນົດການຈັດສັນກຳໄລເປັນຄັງສຳຮອງຕາມກົດໝາຍຢ່າງໜ້ອຍ 10% ຂອງກຳໄລສຸດທິປະຈຳປີ ຈົນກວ່າຈະບັນລຸ 50% ຂອງທຶນຮຸ້ນທີ່ໄດ້ຮັບອະນຸຍາດ.

13. ກຳໄລພື້ນຖານຕໍ່ຮຸ້ນ

ກຳໄລພື້ນຖານຕໍ່ຮຸ້ນແມ່ນຄິດໄລ່ໂດຍການຫານກຳໄລສຸດທິ ທີ່ເປັນຂອງຜູ້ຖືຮຸ້ນໂດຍສະເລ່ຍຕາມຈຳນວນຂອງຮຸ້ນສາມັນ ທີ່ອອກໃນລະຫວ່າງໄລຍະ, ປັບປຸງຕາມຜົນກະທົບຈາກການປ່ຽນແປງຂອງມູນຄ່າກຳນົດຂອງຮຸ້ນ ເພື່ອປຽບທຽບດັ່ງຕໍ່ໄປນີ້:

	ທົບທວນຄືນ 31 ມີນາ 2022	ທົບທວນຄືນ 31 ມີນາ 2021	
		ຫຼັງການປ່ຽນ ມູນຄ່າກຳນົດ	ກ່ອນການປ່ຽນ ມູນຄ່າກຳນົດ
ກຳໄລສຸດທິທີ່ເປັນຂອງຜູ້ຖືຮຸ້ນສາມັນ (ກີບ)	1.898.202.733	2.064.615.515	2.064.615.515
ສະເລ່ຍຕາມຈຳນວນຂອງຮຸ້ນສາມັນທີ່ອອກ (ຮຸ້ນ)	400.000.000	400.000.000	40.000.000
ກຳໄລພື້ນຖານຕໍ່ຮຸ້ນ (ກີບ)	4,75	5,16	51,62

ເພື່ອຈຸດປະສົງໃນການປຽບທຽບ ບໍລິສັດໄດ້ນຳສະເໜີໃຫ້ເຫັນວ່າກຳໄລພື້ນຖານຕໍ່ຮຸ້ນ ໃນວັນທີ 31 ມີນາ 2021 ຈະມີການປ່ຽນແປງຖ້າຫາກປີທີ່ແລ້ວມີການປ່ຽນມູນຄ່າກຳນົດ ແລະ ຈຳນວນຮຸ້ນ.

14 ເງິນປັນຜົນ

ໃນກອງປະຊຸມຜູ້ຖືຮຸ້ນສາມັນປະຈຳປີ 2020 ໃນວັນທີ 27 ເມສາ 2021, ຜູ້ຖືຮຸ້ນໄດ້ອະນຸມັດການຈ່າຍເງິນປັນຜົນປະຈຳປີຈາກ ກຳໄລສຸດທິ 12 ເດືອນ ໄລຍະສິ້ນສຸດ ວັນທີ 31 ທັນວາ 2020 ໃນມູນຄ່າ 155 ກີບຕໍ່ຮຸ້ນ, ລວມມູນຄ່າ 6.200 ລ້ານກີບ ແລະ ຈັດສັນກຳໄລສຸດທິ ເພື່ອສຳຮອງຕາມກົດໝາຍຈຳນວນເງິນ 774.478.318 ກີບ.

15. ລາຍຮັບອື່ນໆ

ລາຍຮັບອື່ນໆປະກອບມີດັ່ງຕໍ່ໄປນີ້:

	ທີ່ບທວນຄືນ 31 ມີນາ 2022 ກີບ	ທີ່ບທວນຄືນ 31 ມີນາ 2021 ກີບ
ຄ່າປັບໃໝ	293.001.697	307.125.420
ລາຍຮັບອື່ນໆ	32.340.834	63.000.306
ລວມ	**325.342.531**	**370.125.726**

16. ລາຍຈ່າຍໃນການບໍລິຫານ

ລາຍຈ່າຍໃນການບໍລິຫານ ປະກອບມີດັ່ງນີ້:

	ທີ່ບທວນຄືນ 31 ມີນາ 2022 ກີບ	ທີ່ບທວນຄືນ 31 ມີນາ 2021 ກີບ
ລາຍຈ່າຍພະນັກງານ	2.394.599.127	2.032.236.024
ຄ່າຕອບແທນຜູ້ບໍລິຫານ	217.250.000	220.250.000
ລາຍຈ່າຍສາທະນຸປະໂພກ	165.888.709	135.651.982
ຂາກທຶນສຸດທິຈາກການຂາຍຊັບສິນລໍຖ້າການຂາຍ	127.567.103	135.541.179
ຄ່າຫຼຸ້ນຫ້ຽນ	137.016.286	132.350.651
ລາຍຈ່າຍອື່ນໆ	773.385.479	571.668.488
ລວມ	**3.815.706.704**	**3.227.698.324**

17. ອາກອນລາຍໄດ້

ອີງຕາມກົດໝາຍສ່ວຍສາອາກອນ ສະບັບເລກທີ 259 ທີ່ມີຜົນບັງຄັບໃຊ້ໃນວັນທີ 1 ມັງກອນ 2020, ບໍລິສັດໄດ້ຮັບສິດທິພິເສດ ຕາມກົດໝາຍສ່ວຍສາອາກອນລາວໂດຍການຫຼຸດອັດຕາອາກອນກຳໄລ 5% ຂອງອັດຕາປົກກະຕິເປັນເວລາ 4ປີ ນັບຕັ້ງແຕ່ວັນທີ ຈົດທະບຽນເຂົ້າຕະຫຼາດຫຼັກຊັບລາວ ເຊິ່ງສິ້ນສຸດໃນປີ 2021 (ວັນທີຈົດທະບຽນເຂົ້າຕະຫຼາດຫຼັກຊັບລາວ ວັນທີ 13 ມິຖຸນາ 2018.)

ດັ່ງນັ້ນ ນັບຕັ້ງແຕ່ປີ 2022 ເປັນຕົ້ນໄປ ບໍລິສັດໄດ້ຄິດໄລ່ອາກອນກຳໄລ ທີ່ຕ້ອງເສຍອາກອນໃນອັດຕາ 20% ພາຍຫຼັງທີ່ ພິຈາລະນາລາຍຮັບ ແລະ ລາຍຈ່າຍ ທີ່ບໍ່ສາມາດຫັກອອກໄດ້ ຕາມກົດໝາຍສ່ວຍສາອາກອນລາວ.

ຢູ່ໃນ ສປປ ລາວ, ການແຈ້ງຈ່າຍອາກອນລາຍໄດ້ຖືກກວດກາເປັນປົກກະຕິໂດຍລະອຽດ ຈາກເຈົ້າໜ້າທີ່ກ່ຽວຂ້ອງ. ນອກຈາກນັ້ນ ບັນຫາດ້ານອາກອນທີ່ຖືກຍົກຂຶ້ນມາໃນການທົບທວນຄືນອາດຈະຕ້ອງມີການຕັດສິນ ແລະ ການຕີຄວາມທີ່ມີສາລະສຳຄັນ ຈາກ ພາກສ່ວນທີ່ກ່ຽວຂ້ອງ.

18. ລາຍການເຄື່ອນໄຫວກັບພາກສ່ວນທີ່ກ່ຽວຂ້ອງ

ກ. ລາຍການເຄື່ອນໄຫວກັບພາກສ່ວນທີ່ກ່ຽວຂ້ອງ

ລາຍການເຄື່ອນໄຫວກັບພາກສ່ວນທີ່ກ່ຽວຂ້ອງ ສຳລັບສາມເດືອນສິ້ນສຸດ ວັນທີ 31 ມີນາ, ມີດັ່ງນີ້:

	ທົບທວນຄືນ 31 ມີນາ 2022 ກີບ	ທົບທວນຄືນ 31 ມີນາ 2021 ກີບ
ການຊື້ສິນຄ້າ ແລະ ບໍລິການ:		
ບໍລິສັດ ມະຫະທຸນ ໂຮນດິ້ງ ຈຳກັດ		
ຄ່າຄ້ຳປະກັນ	570.753.568	384.543.936
	570.753.568	**384.543.936**
ພາກສ່ວນທີ່ກ່ຽວຂ້ອງອື່ນໆ*		
ຊື້ຊັບສິນເຊົ່າສິນເຊື່ອ	3.960.724.000	1.543.029.000
ຈ່າຍຄ່ານາຍໜ້າ	203.500.000	91.000.000
ລາຍຈ່າຍອື່ນໆ	68.250.000	13.968.000
	4.232.474.000	**1.647.997.000**
ລວມ	**4.803.227.568**	**2.032.540.936**

* ຜູ້ອຳນວຍການຂອງບໍລິສັດ ເປັນຜູ້ຖືຮຸ້ນໃນກິດຈະການ.

ລາຍການເຄື່ອນໄຫວກັບພາກສ່ວນທີ່ກ່ຽວຂ້ອງ (ຕໍ່)

ຂ. ຍອດຄ້າງຊຳລະທີ່ເກີດຂຶ້ນຈາກການຂາຍ/ຊື້ ສິນຄ້າ/ບໍລິການ

	ທົບທວນຄືນ 31 ມີນາ 2022 ກີບ	ກວດສອບ 31 ທັນວາ 2021 ກີບ
ໜີ້ຕ້ອງສົ່ງ:		
ພາກສ່ວນທີ່ກ່ຽວຂ້ອງອື່ນໆ*		
ໜີ້ຕ້ອງສົ່ງການຄ້າ	301.333.000	313.206.000
ໜີ້ຕ້ອງສົ່ງອື່ນໆ	67.750.000	38.750.000
ລວມ	**269.083.000**	**351.956.000**

* ຜູ້ອຳນວຍການຂອງບໍລິສັດ ເປັນຜູ້ຖືຮຸ້ນໃນກິດຈະການ.

ຄ. ຄ່າຕອບແທນຜູ້ບໍລິຫານຫຼັກ

ຄ່າຕອບແທນໃຫ້ຜູ້ບໍລິຫານມີດັ່ງຕໍ່ໄປນີ້:

	ທົບທວນຄືນ 31 ມີນາ 2022 ກີບ	ທົບທວນຄືນ 31 ມີນາ 2021 ກີບ
ເງິນເດືອນ ແລະ ອື່ນໆ	217.250.000	220.250.000

19. ພາລະຜູກພັນ

ພາລະຜູກພັນຕາມສັນຍາເຊົ່າເພື່ອການດຳເນີນງານ

ບໍລິສັດ ມີພາລະຜູກພັນຕາມສັນຍາເຊົ່າພື້ນທີ່ສຳນັກງານໄລຍະຍາວ ສຳລັບການເຊົ່າພື້ນທີຫ້ອງການ

ໃນວັນທີ 31 ມີນາ 2022 ແລະ ວັນທີ 31 ທັນວາ 2021, ພາລະຜູກພັນຕາມສັນຍາເຊົ່າເພື່ອການດຳເນີນງານແຕ່ບໍ່ໄດ້ຮັບຮູ້ເປັນໜີ້ສິນມີດັ່ງນີ້:

	ທົບທວນຄືນ 31 ມີນາ 2022 ກີບ	ກວດສອບ 31 ທັນວາ 2021 ກີບ
ພາຍໃນ 1 ປີ	233.469.059	126.981.858
ເກີນ 1 ປີ ແຕ່ບໍ່ເກີນ 5 ປີ	1.370.858.052	1.340.322.412
ເກີນ 5 ປີ	15.138.733	31.006.070
ລວມ	**1.619.465.844**	**1.498.310.340**

20. ເຫດການເກີດຂຶ້ນພາຍຫຼັງວັນທີ່ອອກບົດລາຍງານທາງການເງິນ

ບໍ່ມີເຫດການທີ່ເປັນສາລະສຳຄັນຫຼັງບົດລາຍງານຖານະການເງິນ ທີ່ມີຜົນກະທົບທີ່ເປັນສາລະສຳຄັນຕໍ່ຕົວເລກໃນຂໍ້ມູນການເງິນ ກາງປີຂອງບໍລິສັດ.